**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0450/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 10/02/2023

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2023.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ບໍລິສັດ**”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 1/2023 ວັນທີ 09 ກຸມພາ 2023, ມີລາຍລະອຽດລຸ່ມນີ້:

1. ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ດັ່ງນີ້:

    1) ສະຖານທີ່: ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

    2) ວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ: ວັນທີ **10/03/2023**.

    3) ວັນ-ເວລາປະຊຸມ: ວັນທີ **25/04/2023** ເວລາ 13:30-15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00-17:00ໂມງ ປະຊຸມສາມັນຜູ້ຖືຮຸ້ນ.

    ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ ແລະ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ປະຊຸມຜູ້ຖືຮຸ້ນດັ່ງກ່າວ.

2. ສຳລັບວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແມ່ນຈະແຈ້ງໃຫ້ທ່ານຊາບໃນໜັງສືແຈ້ງເຊີນ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ວັນແສງ ວັນນະວົງ

ຮັກສາການ ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la